ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ກະຊວງສຶກສາທິການ ແລະ ກິລາ ເລກທີ: 4201 /ສສກ.ຈຕ

ນະຄອນຫຼວງວຽງຈັນ, ວັນທີ: 07 NOV 2011

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການແຜນການ ແລະ ການຮ່ວມມື ມະຫາວິທະຍາໄລສຸພານຸວົງ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງສຶກສາທິການ ແລະ ກິລາ;
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 099/ນຍ, ລົງວັນທີ 03 ເມສາ 200, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ມະຫາວິທະຍາໄລ ສຸພານຸວົງ;
- ອີງຕາມ ໜັງສືສະເໜີ ຂອງ ອະທິການບໍດີ ມະຫາວິທະຍາໄລສຸພານຸວົງ ສະບັບເລກທີ 2663/ມສ, ລົງວັນທີ 11 /09/ 2009,
- ອີງຕາມ ໜັງສືສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ,

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ຈຶ່ງຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ລະບອບແບບແຜນວິທີເຮັດວຽກເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການແຜນການ ແລະ ຮ່ວມມື ໃນການປະຕິບັດແຜນພັດທະນາ ຂອງມະຫາວິທະຍາໄລສຸພານຸວົງ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ຫ້ອງການແຜນການ ແລະ ຮ່ວມມື ຊຽນຫຍໍ້ "ຜຮ" ເປັນກົງຈັກບໍລິຫານ, ມີພາລະບົດບາດ ເປັນເສນາທິການ ໃຫ້ແກ່ ອະທິການບໍດີ ດ້ານວຽກງານແຜນການ ແລະ ຮ່ວມມື, ເປັນຈຸດໃຈກາງໃນການປະສານງານກັບບັນດາຄະນະວິຊາ, ຫ້ອງການ, ການຈັດຕັ້ງຕ່າງໆ ຢູ່ ມະຫາວິທະຍາໄລສຸພານຸວົງ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

ຫ້ອງການແຜນການ ແລະ ຮ່ວມມື ມີໜ້າທີ່ດັ່ງນີ້:

- ສຶກສາອົບຮົມ ດ້ານການເມືອງ, ແນວຄິດ, ຄຸນສົມບັດ ແລະ ລະບຽບກົດໝາຍຕ່າງໆ ໃຫ້ແກ່ພະນັກງານພາຍໃນຫ້ອງການແຜນການ ແລະ ຮ່ວມມື ໃຫ້ເປັນພົນລະເມືອງດີຂອງຊາດ;
- ຄົ້ນຄວ້າຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ຄຳແນະນຳ ໄປຜັນຂະຫຍາຍເປັນແຜນການ, ແຜນງານ, ໂຄງການ ທັງໄລຍະສັ້ນ ແລະ ໄລຍະຍາວ;
- ສັງລວມແຜນ, ໂຄງການ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບ ແຜນການ ແລະ ການຮ່ວມມື ຈາກ ບັນດາຄະນະວິຊາຕ່າງໆ;
- ສົ່ງເສີມທັດສະນະຄິດປະດິດສ້າງແຜນການ ແລະ ການຮ່ວມມື ດ້ານວິຊາການ ໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ;
- ຄຸ້ມຄອງຂໍ້ມູນແຜນການ ແລະ ການຮ່ວມມື ກັບ ຕ່າງປະເທດ ເພື່ອຕິດຕາມ, ກວດກາ ແລະ ປະເມີນຜົນ ຕາມລະບຽບຫຼັກການ;
- ຄຸ້ມຄອງ, ຕິດຕາມ, ນັກສຶກສາຕ່າງປະເທດ ແລະ ຊ່ຽວຊານຕ່າງປະເທດ ຕາມລະບຽບຫຼັກການ;
- ຜັນຂະຫຍາຍຜົນ ຂອງ ການຮ່ວມມື ອອກສູ່ສັງຄົມ, ຊອກຫາແຫຼ່ງຂໍ້ມູນ-ຂ່າວສານ ຢູ່ພາຍໃນ ແລະ ຕ່າງປະເທດ; ຈັດຕັ້ງເຜີຍແຜ່ໃຫ້ສັງຄົມຮັບຮູ້ດ້ວຍຮູບການຈັດສຳມະນາ ແລະ ຝຶກອົບຮົມ;
- ຂຶ້ນແຜນນຳໃຊ້ງົບປະມານ, ແຫຼ່ງລາຍຮັບ, ວັດຖຸ-ອຸປະກອນ, ອາຄານສະຖານທີ່ ແລະ ພາຫະນະ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
- ສະຫຼຸບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນໂຄງການການເຄື່ອນໄຫວ ດ້ານການຮ່ວມມື ຂອງ ຄະນະວິຊາຕ່າງໆ ຕາມການມອບໝາຍ;
- ພົວພັນ-ປະສານງານ ກັບ ບັນດາຫ້ອງການ, ຄະນະວິຊາ ແລະ ການຈັດຕັ້ງຕ່າງໆ ຢູ່ ມະຫາວິທະຍາໄລ ສຸພານຸວົງ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

### ມາດຕາ 4. ຂອບເຂດສິດ

ຫ້ອງການແຜນການ ແລະ ຮ່ວມມື ມີຂອບເຂດສິດ ດັ່ງນີ້:

- ສັງລວມ, ສະຫຼຸບ ແລະ ລາຍງານທຸກການເຄື່ອນໄຫວແຜນການ ແລະ ການຮ່ວມມື ຂອງ ມະຫາວິທະຍາໄລ ສຸພານຸວົງ ໃຫ້ການຈັດຕັ້ງຂັ້ນເທິງຊາບ ເປັນແຕ່ລະໄລຍະ;
- ສະເໜີແຜນພັດທະນາການຮ່ວມມືດ້ານວິຊາການແລກປ່ຽນປະສົບປະການ ຂອງ ຄູ-ອາຈານ ແລະ ຊ່ຽວຊານ;
- ສະເໜີແຜນການຮ່ວມມືກັບບັນດາຂະແໜງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
- ປະຕິບັດນະໂຍບາຍຕໍ່ພະນັກງານ ຄູ-ອາຈານ ຕາມລະບຽບການ;
- ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

ຫ້ອງການແຜນການ ແລະ ຮ່ວມມື ມີໂຄງປະກອບກົງຈັກດັ່ງນີ້:

- ພະແນກ ແຜນການ;
- ພະແນກ ຄຸ້ມຄອງນັກສຶກສາ ແລະ ຊ່ຽວຊານຕ່າງປະເທດ;
- ພະແນກ ຮ່ວມມື ແລະ ຄຸ້ມຄອງໂຄງການ.

### ມາດຕາ 6. ໂຄງປະກອບບຸກຄະລາກອນ

ຫ້ອງການແຜນການ ແລະ ຮ່ວມມື ປະກອບດ້ວຍ ຫົວໜ້າຫ້ອງການ 1 ທ່ານ, ຮອງຫົວໜ້າຫ້ອງການຈຳນວນໜຶ່ງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານຈຳນວນໜຶ່ງ ທີ່ຖືກແຕ່ງຕັ້ງ ຕາມລະບຽບການ.

### ມາດຕາ 7. ໜ້າທີ່ ແລະ ຂອບເຂດສິດ ຂອງຫົວໜ້າ ແລະ ຮອງຫົວໜ້າຫ້ອງການ

- ຫົວໜ້າຫ້ອງການມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ ແລະ ຂອບເຂດສິດທີ່ໄດ້ ກຳນົດໄວ້ໃນມາດຕາ 3 ແລະ ມາດຕາ 4 ຂອງ ຂໍ້ຕົກລົງ ສະບັບນີ້;
- ຮອງຫົວໜ້າຫ້ອງການມີໜ້າທີ່ຊ່ວຍຮັບຜິດຊອບວຽກງານຕ່າງໆຕາມການມອບໝາຍ ໃນກໍລະນີຫົວໜ້າບໍ່ຢູ່ ຮອງຫົວໜ້າຫ້ອງການ ທ່ານໃດໜຶ່ງ ມີສິດບໍລິຫານວຽກງານດ້ານຕ່າງໆ ຕາມການມອບໝາຍເປັນລາຍລັກອັກສອນ.

## ໝວດທີ IV
## ໜ້າທີ່ ແລະ ຂອບເຂດສິດຂອງພະແນກ

ມາດຕາ 8. ໜ້າທີ່ ແລະ ຂອບເຂດສິດຂອງແຕ່ລະພະແນກ

8.1.1 ພະແນກແຜນການ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

- ສ້າງແຜນຍຸດທະສາດ, ແຜນງານໂຄງການ, ບົນພື້ນຖານຂໍ້ມູນຈາກແຕ່ລະຄະນະວິຊາ ແລະ ພາກສ່ວນຕ່າງໆ;
- ຕິດຕາມ, ກວດກາ, ສະຫຼຸບລາຍງານການປະເມີນຜົນ ແລະ ຄວາມຄືບໜ້າ ຂອງ ການປະຕິບັດແຜນງານ, ໂຄງການ ຈາກ ພາກສ່ວນຕ່າງໆ ເພື່ອລາຍງານຂັ້ນເທິງ;
- ຄົ້ນຄວ້າ ແລະ ສ້າງແຜນການຮ່ວມມື ກັບ ບັນດາຂະແໜງການຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ;
- ຄຸ້ມຄອງພະນັກງານ, ລັດຖະກອນ ແລະ ພະນັກງານໂຄງການ ໃນການປະຕິບັດໜ້າທີ່ວຽກງານ;
- ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ພາຫະນະ ແລະ ວັດຖຸສິ່ງຂອງສ່ວນລວມທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
- ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

8.2 ພະແນກ ຄຸ້ມຄອງນັກສຶກສາ ແລະ ຊ່ຽວຊານຕ່າງປະເທດ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

- ສ້າງແຜນຄຸ້ມຄອງນັກສຶກສາ ຕ່າງປະເທດ ແລະ ຊ່ຽວຊານຕ່າງປະເທດ;
- ອຳນວຍຄວາມສະດວກ ໃຫ້ແກ່ ນັກສຶກສາ ແລະ ຊ່ຽວຊານຕ່າງປະເທດ ທີ່ມາສຶກສາ ແລະ ປະຕິບັດໜ້າທີ່ວຽກງານ;
- ເຜີຍແຜ່ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
- ຕິດຕາມ, ກວດກາ ແລະ ປະເມີນຜົນ ເກັບກຳສະຖິຕິ ແລະ ຂໍ້ມູນຕ່າງໆ ກ່ຽວກັບ ນັກສຶກສາ ແລະ ຊ່ຽວຊານ ເປັນແຕ່ລະໄລຍະ;
- ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

8.3. ພະແນກຮ່ວມມື ແລະ ຄຸ້ມຄອງໂຄງການ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

- ສ້າງແຜນໂຄງການຮ່ວມມື ກັບ ບັນດາອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
- ປະສານ, ສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ ການສຶກສາ ແລະ ຊ່ຽວຊານ;
- ກວດກາ, ປະເມີນຜົນ, ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນການຮ່ວມມື ກັບ ບັນດາອົງການຈັດຕັ້ງຕ່າງໆ ຢ່າງເປັນປົກກະຕິ;
- ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ ຂອງ ຂັ້ນເທິງ.

## ໝວດທີ V
## ລະບອບແບບແຜນ ວິທີເຮັດວຽກ ແລະ ການພົວພັນປະສານງານ

**ມາດຕາ 9. ລະບອບແບບແຜນວິທີເຮັດວຽກ**

ຫ້ອງການແຜນການ ແລະ ຮ່ວມມື ເຄື່ອນໄຫວຕາມລະບຽບຫຼັກການ ດັ່ງນີ້:

- ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ;
- ທຸກການເຄື່ອນໄຫວ ແລະ ດຳເນີນງານ ຂອງ ຫ້ອງການແຜນການ ແລະ ຮ່ວມມື ແມ່ນອີງໃສ່ທິດທາງແຜນການລວມ ຂອງ ມະຫາວິທະຍາໄລ ສຸພານຸວົງ ບົນພື້ນຖານແນວທາງນະໂຍບາຍ ຂອງ ພັກ ແລະ ລະບຽບກົດໝາຍ ຂອງ ລັດ;
- ປະຕິບັດລະບອບປະຊຸມ, ຖອດຖອນບົດຮຽນ, ກວດກາ-ປະເມີນຜົນ ແລະ ລາຍງານ ຕາມລະບຽບການ.

**ມາດຕາ 10. ການພົວພັນປະສານງານ**

- ຫ້ອງການແຜນການ ແລະ ຮ່ວມມື ມີສິດພົວພັນ-ປະສານງານໂດຍກົງ ກັບ ບັນດາຫ້ອງການ, ບັນດາຄະນະວິຊາ, ສູນ, ວິທະຍາໄລ, ຫໍສະໝຸດກາງ ພາຍໃນ ມະຫາວິທະຍາໄລ ສຸພານຸວົງ;
- ພົວພັນ ແລະ ປະສານງານ ທາງດ້ານການຈັດຕັ້ງ ແລະ ຄຸ້ມຄອງພະນັກງານ ກັບ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 11. ກາປະທັບ**

ຫ້ອງການແຜນການ ແລະ ຮ່ວມມື ມີກາປະທັບເປັນຂອງຕົນເອງ ຕາມລະບຽບຫຼັກການ ເພື່ອເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 12. ກາໝາຍ ແລະ ເຄື່ອງແບບ**

ຫ້ອງການ ແຜນການ ແລະ ຮ່ວມມື ມີກາໝາຍ ແລະ ເຄື່ອງແບບ ຕາມລະບຽບການທີ່ຂັ້ນເທິງວາງອອກ.

**ມາດຕາ 13. ການຜັນຂະຫຍາຍ**

ມອບໃຫ້ຫ້ອງການແຜນການ ແລະ ຮ່ວມມືເປັນຜູ້ຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້

**ມາດຕາ 14. ການຈັດຕັ້ງປະຕິບັດ**

ມະຫາວິທະຍາໄລ ສຸພານຸວົງ, ຄະນະວິຊາ, ຫ້ອງການ, ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ, ຂໍ້ຕົກລົງ ແລະ ລະບຽບການອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ. ພັນຄຳ ວິພາວັນ